ຂ່າວ NEWS
ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ຖະໜົນ ເລກ 7, ບ້ານ ໂພນສະຫວັນກາງ, ເມືອງ ແປກ, ແຂວງ ຊຽງຂວາງ | ໂທ/TEL: +856-61 260030-31
BANK OF THE LAO PDR NORTHERN AT XIENGKHOUANG PROVINCE, No.7 RD, PHONESAVANHKANG VILLAGE, PEAK DISTRICT, XIENGKHUANG PROVINCE | ແຟັກ/FAX: +856-61 260034

# ພິທີປະກາດ 4 ບຸກ
## ຂອງໜ່ວຍຊາວໜຸ່ມສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ




ໃນຕອນບ່າຍຂອງ ວັນທີ **15** ກັນຍາ **2021** ໜ່ວຍຊາວໜຸ່ມ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ໄດ້ຈັດພິທີປະກາດ **4** ບຸກຂອງໜ່ວຍຊາວໜຸ່ມ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ຂຶ້ນທີ່ຫ້ອງປະຊຸມໃຫຍ່ ຊັ້ນ **VI** ຂອງ ທຫລ.ຊຂ ໂດຍໃຫ້ກຽດເປັນປະທານຮ່ວມມີ ສະຫາຍ ວິສອນ ໄຊສີງຄາມ ເລຂາຄະນະພັກຮາກຖານທະນາຄານແຂວງຊຽງຂວາງ, ເລຂາໜ່ວຍພັກ ຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ, ສະຫາຍ ເພັດສະໝອນ ດາວົງສອນ ເລຂາຄະນະບໍລິຫານງານຊາວໜຸ່ມ ແຂວງຊຽງຂວາງ, ສະຫາຍ ອານຸສອນ ຫຼວງປັນຍາ ຄະນະໜ່ວຍຊາວໜຸ່ມ ທຫລ.ຊຂ, ມີປະທານໜ່ວຍກຳມະບານ, ປະທານກວດກາໜ່ວຍແມ່ຍິງ ພ້ອມດ້ວຍບັນດາສະມາຊິກຊາວໜຸ່ມໜ່ວຍ ທຫລ.ຊຂ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ສະຫາຍ ອານຸສອນ ຫຼວງປັນຍາ ຄະນະໜ່ວຍຊາວໜຸ່ມ ທຫລ.ຊຂ ໄດ້ຂຶ້ນຜ່ານບົດສະຫຼຸບ ບັ້ນແຂ່ງຂັນ **4** ບຸກ ປີ **2020** ແລະ ທິດທາງແຜນການ ປີ **2021** ທຫລ.ຊຂ ໂດຍໃຫ້ຮູ້ວ່າ ໜ່ວຍຊາວໜຸ່ມ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ເປັນໜ່ວຍໜຶ່ງທີ່ຂຶ້ນກັບຄະນະບໍລິຫານງານຊາວໜຸ່ມແຂວງໂດຍກົງ ໄດ້ຖືກຮັບຮອງໃຫ້ເຄື່ອນໄຫວໃນອົງການຈັດຕັ້ງມະຫາຊົນຮ່ວມນຳ ແຂວງຊຽງຂວາງ ໃນທ້າຍປີ **2017** ນັບແຕ່ເລີ່ມກໍ່ຕັ້ງ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ເປັນຕົ້ນມາ, ເຊິ່ງປັດຈຸບັນມີຈຳນວນສະມາຊິກຊາວໜຸ່ມທັງໝົດ **52** ສະຫາຍ, ເປັນຍິງ **23** ສະຫາຍ ມີໂຄງປະກອບການຈັດຕັ້ງ ແລະ ໄດ້ຮັບການຊີ້ນຳ-ນຳພາໂດຍກົງຈາກ ໜ່ວຍພັກສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ແລະ ຄະນະບໍລິຫານງານຊາວໜຸ່ມ ແຂວງຊຽງຂວາງ.

ຫຼັງຈາກນັ້ນ, ໃນກອງປະຊຸມກໍ່ໄດ້ຜ່ານຂໍ້ຕົກລົງ ສະບັບເລກທີ **530**/ຄຊປລຂ, ລົງວັນທີ **05** ສິງຫາ **2021** ວ່າດ້ວຍການມອບໃບຢັ້ງຢືນຕົວແບບ **4** ບຸກ ໃຫ້ແກ່ໜ່ວຍຊາວໜຸ່ມ ສາຂາທະນາຄານ

ແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ເຊິ່ງໃຫ້ກຽດຂຶ້ນມອບໃບຍັ້ງຢືນດັ່ງກ່າວແມ່ນ ສະຫາຍ ເພັດສະໝອນ ດາວົງສອນ ເລຂາຄະນະບໍລິຫານງານຊາວໜຸ່ມ ແຂວງຊຽງຂວາງ ແລະ ຂຶ້ນຮັບເອົາໂດຍ ສະຫາຍ ອານຸສອນ ຫຼວງປັນຍາ ຄະນະໜ່ວຍຊາວໜຸ່ມ ທຫລ.ຊຂ. ພ້ອມດຽວກັນນີ້, ກໍ່ຍັງໄດ້ມີການ ຍ້ອງຍໍສັນລະເສີນສະມາຊິກຊາວໜຸ່ມຜູ້ທີ່ມີຜົນງານ ໃນການປະກອບສ່ວນເຂົ້າໃນວຽກງານຊາວໜຸ່ມໃນ ໄລຍະ **01** ປີ ຜ່ານມາ ຈຳນວນທັງໝົດ **52** ສະຫາຍ ໃນນີ້ປະກອບມີ ປະເພດແຂງ **49** ສະຫາຍ, ຍິງ **22** ສະຫາຍ ແລະ ປະເພດກາງ **03** ສະຫາຍ, ຍິງ **02** ສະຫາຍ ໂດຍອີງຕາມຂໍ້ຕົກລົງ ເລກທີ **532**/ຄຊປປລຂ, ວັນທີ **05** ສິງຫາ **2021**.










ໃນຕອນທ້າຍ ຄະນະປະທານຍັງໄດ້ມີຄຳເຫັນໂອ້ລົມຕໍ່ພິທີດັ່ງກ່າວວ່າ ການຈັດຕັ້ງປະຕິບັດວຽກງານ ທີ່ຜ່ານມາ ແລະ ແຜນສືບຕໍ່ວຽກງານໃນຕໍ່ໜ້າ ເຊິ່ງເປັນເງື່ອນໄຂໃຫ້ສະມາຊິກຊາວໜຸ່ມນຳໄປຝຶກຝົນຕົນ ເອງ ໃຫ້ກາຍເປັນພະນັກງານດີເດັ່ນ, ໃຫ້ມີຄວາມບຸກບືນຫ້າວຫັນສົມຄຳເວົ້າທີ່ວ່າ: ຊາວໜຸ່ມເປັນແຂນ ຂວາຂອງພັກ, ເປັນກະດູກສັນຫຼັງຂອງຊາດ. ຄຽງຄູ່ກັບດ້ານດີທີ່ຕັ້ງໜ້າທີ່ຍາດມາໄດ້ນັ້ນ ພວກເຮົາຍັງມີ ຫຼາຍວຽກງານທີ່ຕ້ອງໄດ້ສຸມເຫື່ອແຮງ ແລະ ສະຕິປັນຍາ ສິ່ງສຳຄັນຕ້ອງໄດ້ເອົາໃຈໃສ່ ເພື່ອປັບປຸງແກ້ໄຂ ບາງບັນຫາ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດແຜນການຈັດຕັ້ງຂໍ້ແຂ່ງຂັນ **4** ບຸກ ປະຈຳປີ **2021** ຂອງ ຊາວໜຸ່ມໜ່ວຍ ທຫລ.ຊຂ ຕ້ອງກ້າປ່ຽນແປງ, ກ້າເຮັດດ້ວຍຄວາມຮັບຜິດຊອບສູງ ເພື່ອໃຫ້ມີແນວຄິດທີ່ ກ້າວໜ້າ, ຕ້ອງເອົາໃຈໃສ່ຮຽນຮູ້ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີໃໝ່ ເພື່ອມາໝູນໃຊ້ໃນການ ປະຕິບັດວຽກງານ.

ຂ່າວ: ສຸກສະຫວັນ ພົມມະວົງ